ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 1609 - ........./ ຜຟຟລ
ນະຄອນຫຼວງວຽງຈັນ, ວັນ 27 JUL 2018

## ບົດຂ່າວ: ພະນັກງານ ຜ-ຟຟລ ແລະ ພະນັກງານບໍລິສັດ ອອ້ມຂ້າງຮ່ວມບໍລິຈາກໃຫ້ຜູ້ ປະສົບໄພນໍ້າຖ້ວມ ທີ່ ເມືອງ ສະໜາມໄຊ, ແຂວງອັດຕະປື

ພາຍຫຼັງທີ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ໃຫ້ການບໍລິຈາກເບື້ອງຕົ້ນ ເປັນຈຳນວນເງິນທັງໝົດ 100.000.000 ກີບ ໃນວັນທີ 25 ກໍລະກົດ 2018 ເພື່ອຊ່ວຍເຫຼືອຜູ້ປະສົບໄພ ທີ່ໄດ້ຮັບຜົນກະທົບຈາກເຫດການອຸປະຕິເຫດໂຄງການກໍ່ສ້າງເຂື່ອນໄຟຟ້າເຊປຽນ-ເຊນໍ້ານ້ອຍ ຢູ່ແຂວງອັດຕະປື ໃນຄັ້ງວັນທີ 23 ກໍລະກົດ 2018.

ພ້ອມກັນນີ້ໃນລະຫວ່າງວັນທີ 24-25 ກໍລະກົດ 2018, ພະນັກງານຂອງ ຜ-ຟຟລ ທັງທີ່ສັງກັດຢູ່ສຳນັກງານໃຫຍ່ ແລະ ບັນດາເຂື່ອນທີ່ ຜ-ຟຟລ ຄຸ້ມຄອງ ພ້ອມດ້ວຍພະນັກງານຂອງ ບໍລິສັດ ບໍລິການຄຸ້ມຄອງຜະລິດ ແລະ ບຳລຸງຮັກສາ ຜ-ຟຟລ ຈຳກັດ, ບໍລິສັດ ອີດີແອວເຈນ ໂຊ້ລ້າ ພາວເວີ, ບໍລິສັດ ນໍ້າດົກ-1 ພາວເວີ ຈຳກັດ ແລະ ບໍລິສັດ ນໍ້າບີ ພາວເວີ ຈຳກັດ ໄດ້ຮ່ວມໃຈກັນລະດົມທຶນຮອນສ່ວນຕົວ ລວມເປັນເງິນທັງໝົດ 62.947.000 ກີບ ເພື່ອຊ່ວຍເຫຼືອຜູ້ປະສົບໄພດັ່ງກ່າວ ທັງນີ້ກໍ່ເພື່ອເປັນການແບ່ງປັນ ແລະ ບັນເທົາຄວາມທຸກຂອງພີ່ນ້ອງຮ່ວມຊາດກໍ່ຄືພີ່ນ້ອງທີ່ ແຂວງອັດຕະປື.




ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ. ຕູ້ປ. ນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la,ເວັບໄຊທ໌:www.edlgen.com.la